# ສິດສະເໝີພາບລະຫວ່າງຍິງ- ຊາຍ

## ດ້ານການເມືອງ

ສິດສະເໝີ ພາບລະຫວ່າງຍິງ-ຊາຍ ໃນການປ່ອນບັດເລືອກຕັ້ງ ແລະ ຮັບສະໝັກເລືອກຕັ້ງ





ຍິງ-ຊາຍມີສິດສະເໝີພາບກັນໃນການເຂົ້າຮ່ວມການເຄື່ອນໄຫວທາງດ້ານການເມືອງ ເຊັ່ນ: ບັນຈຸຊັບຊ້ອນເຂົ້າໃນຕໍາແໜ່ງງານຕ່າງໆຂອງພັກ-ລັດ.

## ດ້ານເສດຖະກິດ

ຍິງ - ຊາຍ ມີສິດສະເໝີພາບໄດ້ຮັບຄ່າຕອບແທນ ແລະ ນະໂຍບາຍອື່ນໆ...ຈາກການປະກອບອາຊີບທີ່ຖືກຕ້ອງຕາມກົດໝາຍ





ຍິງ-ຊາຍມີສິດສະເໝີພາບກັນໃນການເຄື່ອນໄຫວດໍາເນີນທຸລະກິດຕາມເງື່ອນໄຂ ແລະ ຄວາມອາດສາມາດຂອງຕົນເຊັ່ນ: ດໍາເນີນທຸລະກິດ, ເລືອກວິຊາຊີບ ແລະ ວຽກເຮັດງານທໍາທີ່ຖືກຕ້ອງຕາມກົດໝາຍ

## ດ້ານວັດທະນະທໍາ-ສັງຄົມ

ຍິງ-ຊາຍມີສິດສະເໝີພາບໄດ້ຮັບການປິ່ນປົວ,ຟື້ນຟູ ແລະ ພັດທະນາດ້ານສຸຂະພາບ.





ຍິງ-ຊາຍມີສິດສະເໝີພາບກັນໃນການເຂົ້າຮ່ວມການເຄື່ອນໄຫວກິດຈະກໍາຕ່າງໆ ໃນດ້ານວັດທະນະທໍາ-ສັງຄົມ ເຊັ່ນ: ໄດ້ຮັບການສຶກສາສາຍສາມັນ, ວິຊາຊີບ ແລະ ອາຊີວະສຶກສາຢູ່ໃນທຸກສາຂາວິຊາຊີບຕ່າງໆ.

## ດ້ານຄອບຄົວ

ຜົວ ແລະ ເມັຍມີພັນທະໃນການເບິ່ງແຍງ , ລ້ຽງດູ ແລະ ສຶກສາອົບຮົມລູກໃຫ້ເປັນຄົນດີຂອງສັງຄົມ. ລູກຍິງ ແລະ ລູກຊາຍ ມີພັນທະປະກອບສ່ວນເຂົ້າໃນກິດຈະກໍາຂອງຄອບຄົວ ແລະ ການເຄື່ອນໄຫວກິດຈະກໍາຕໍ່ທາງສັງຄົມ.





ຍິງ - ຊາຍ ມີສິດສະເໝີພາບທຸກດ້ານໃນການປະກອບສ່ວນເຂົ້າໃນກິດຈະກໍາຕ່າງໆຂອງຄອບຄົວຕາມຄວາມເໝາະສົມ ເຊັ່ນ: ຜົວ - ເມັຍ ມີຄວາມເປັນເອກະພາບໃນການຕົກລົງບັນຫາສໍາຄັນຕ່າງໆຂອງຄອບຄົວ

ສະໜັບສະໜູນໂດຍ:

UNDP
Empowered lives, Resilient nations

Liberté • Égalité • Fraternité
RÉPUBLIQUE FRANÇAISE

ຈັດພິມໂດຍ: ກົມໂຄສະນາອົບຮົມກົດໝາຍ ຮ່ວມກັບ ແຜນງານທີ 4